ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1862/ອຄ.ກຂອ

ນະຄອນຫລວງວຽງຈັນ, ວັນທີ 5 ພະຈິກ 2008

# ລະບຽບການຊື້-ຂາຍໄມ້ຈາກສວນປູກ

- ອີງຕາມຄຳສັ່ງ ເລກທີ 17/ນຍ ລົງວັນທີ 22/09/08 ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້.
- ເພື່ອເປັນການສົ່ງເສີມການປູກໄມ້ ເພື່ອປົກປັກຮັກສາສິ່ງແວດລ້ອມ ແລະ ເປັນວັດຖຸດິບສະໜອງໃຫ້ແກ່ ໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງເປັນສິນຄ້າ ແລະ ທັງແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນຕາມແຜນພັດທະນາເສດຖະກິດ-ສັງຄົມ.
- ເພື່ອຫັນປ່ຽນວິທີສົ່ງເສີມອຸດສາຫະກຳປຸງແຕ່ງໄມ້ ດ້ວຍການຫລຸດຜ່ອນໄມ້ຈາກປ່າທຳມະຊາດ ແລ້ວຫັນມານຳໃຊ້ໄມ້ປູກທົດແທນ.

ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງວາງລະບຽບການຊື້-ຂາຍໄມ້ຈາກສວນປູກ ດັ່ງຕໍ່ໄປນີ້ :

I. <u>ເງື່ອນໄຂການຊື້-ຂາຍໄມ້</u> :

1. <u>ຝ່າຍຊື້ຕ້ອງມີເງື່ອນໄຂຄົບຖ້ວນດັ່ງລຸ່ມນີ້</u> :
   - ແມ່ນບໍລິສັດ/ໂຮງງານປຸງແຕ່ງໄມ້ ທີ່ຂຶ້ນທະບຽນວິສາຫະກິດ ດຳເນີນທຸລະກິດດ້ານການຜະລິດ ແລະ ປຸງແຕ່ງໄມ້ຖືກຕ້ອງ ຕາມກົດໝາຍວິສາຫະກິດ ຂອງ ສປປລາວ,
   - ເປັນໂຮງງານປຸງແຕ່ງໄດ້ມາດຕະຖານ ຕາມເງື່ອນໄຂ ຂອງຂໍ້ຕົກລົງ ວ່າດ້ວຍມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງໄມ້, ຫວາຍ ແລະ ໄມ້ປ່ອງ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0221/ອຄ ລົງວັນທີ 13/02/07.
   - ເປັນສະມາຊິກຂອງສະມາຄົມອຸດສາຫະກຳປຸງແຕ່ງໄມ້ແຫ່ງຊາດ/ແຂວງ.
   - ມີແຜນການຜະລິດ, ຈຳໜ່າຍ ແລະ ຕະຫລາດຄັກແນ່.
   - ມີບັນຊີເງິນຝາກຢູ່ທະນາຄານທຸລະກິດຢູ່ ສປປລາວ.
   - ມີປະຫວັດການດຳເນີນທຸລະກິດທີ່ຈະແຈ້ງ. ( ການຊຳລະພັນທະອາກອນ, ພາສີ... )
   - ເປັນຜູ້ທີ່ບໍ່ເຄີຍຖືກດຳເນີນຄະດີ, ກ່າວໂທດ ຫລື ຖືກປັບໃໝ ຍ້ອນຝ່າຝືນກົດລະບຽບປ່າໄມ້ ແລະ ກົດໝາຍອື່ນໆ ມາກ່ອນ.
2. <u>ຝ່າຍຂາຍຕ້ອງປະຕິບັດເງື່ອນໄຂຄົບຖ້ວນດັ່ງນີ້:</u>
   - ມີທະບຽນສວນປູກ ຫຼື ມີເອກະສານຢັ້ງຢືນຕົ້ນໄມ້ປູກ ຢັ້ງຢືນຈາກຂະແໜງການກ່ຽວຂ້ອງ.
   - ມີອະນຸຍາດຂຸດຄົ້ນໄມ້ຈາກສວນປູກ.

- ລາຍງານຕໍ່ໜ່ວຍງານປ່າໄມ້ບ້ານ, ເມືອງ ຫລື ແຂວງ ກ່ຽວກັບການຕັດ ແລະ ເຄື່ອນຍ້າຍໄມ້.
- ຈ່າຍຄ່າພັນທະອາກອນຕາມລະບຽບການ.

II. <u>ເງື່ອນໄຂການຮັບ ແລະ ເຄື່ອນຍ້າຍໄມ້ອອກຈາກສວນປູກ.</u>

1. ໄມ້ສາມາດເຄື່ອນຍ້າຍອອກຈາກສະໜາມ II ຫລື ສວນປູກໄດ້ ກໍ່ຕໍ່ເມື່ອໄດ້ຜ່ານການກວດກາ ແລະ ປະກອບເອກະສານຄົບຖ້ວນຕາມລະບຽບການ.
2. ໄມ້ດັ່ງກ່າວໄດ້ຈ່າຍຄ່າພັນທະອາກອນແລ້ວ.
3. ມີການຕີກາ ( ປມ ) ຫລື ( ປມລ ) ໃສ່.

III. <u>ຂັ້ນຕອນການດຳເນີນການຊື້-ຂາຍ, ຮັບ ແລະ ເຄື່ອນຍ້າຍໄມ້</u> :

<u>ຂັ້ນຕອນທີ1</u> : ຫົວໜ່ວຍທຸລະກິດ ( ຝ່າຍຊື້ ) ໄປພົວພັນນຳຝ່າຍຂາຍເພື່ອເຈລະຈາ ແລະ ເຊັນສັນຍາຊື້-ຂາຍ ຕາມແຜນການຂຸດຄົ້ນໄມ້ຈາກສວນປູກໃນແຕ່ລະປີ.

<u>ຂັ້ນຕອນທີ2</u> : ຂະແໜງກະສິກຳ ແລະ ປ່າໄມ້ ຄຸ້ມຄອງການຂຸດຄົ້ນ, ວັດແທກ, ຂຶ້ນບັນຊີ ມອບບັນຊີໄມ້ໃຫ້ຝ່າຍຂາຍ.

<u>ຂັ້ນຕອນທີ3</u> : ພາຍຫລັງໄດ້ຮັບບັນຊີໄມ້ຈາກຂະແໜງກະສິກຳ ແລະ ປ່າໄມ້ ແລ້ວ, ຝ່າຍຂາຍຕ້ອງໄປຊຳລະຄ່າພັນອາກອນ ແລະ ຄ່າທຳນຽມຕ່າງໆ ໃຫ້ຄົບຖ້ວນ.

<u>ຂັ້ນຕອນທີ4</u> : ຂະແໜງ ອຸດສາຫະກຳ ແລະ ການຄ້າ ອອກໃບຕິດຕາມການເຄື່ອນຍ້າຍໄມ້.

<u>ຂັ້ນຕອນທີ5</u>: ຂະແໜງກະສິກຳ ແລະ ປ່າໄມ້ ຕີກາປ່ອຍໄມ້ຕາມລະບຽບການ.

IV. <u>ການສົ່ງອອກໄມ້ທ່ອນ, ຕີຕັບ ແລະ ແປຮູບ ຈາກສວນປູກໄປຕ່າງປະເທດ</u> :

ສຳລັບໄມ້ປູກ ທີ່ບໍ່ນອນຢູ່ໃນບັນຊີໄມ້ປະເພດຫວງຫ້າມ ແລະ ໄມ້ພິເສດ ສາມາດສົ່ງອອກຕ່າງປະເທດໄດ້ແຕ່ຕ້ອງໄດ້ຮັບການອະນຸຍາດຈາກກະຊວງອຸດສາຫະກຳ ແລະ ການຄ້າ ( ກົມການນຳເຂົ້າ ແລະ ສົ່ງອອກ ) ກ່ອນບົນພື້ນຖານການຢັ້ງຢືນ ຂອງກະຊວງ ກະສິກຳ ແລະ ປ່າໄມ້.

ລະບຽບການສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

ລັດຖະມົນຕີ ວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ,

ກະຊວງອຸດສາຫະກຳແລະການຄ້າ

ລັດຖະມົນຕີ

ດຣ. ນາມ ວິຍະເກດ